# ກະຊວງສຶກສາທິການແຫ່ງສະຫະລັດ

## ຫ້ອງການປ້ອງກັນສິດທິຂອງປະຊາຊົນ
## ຄຳຮ້ອງທຸກກ່ຽວກັບການເລືອກປະຕິບັດ

1. **ບອກລາຍລະອຽດກ່ຽວກັບທ່ານເອງ.**

ຊື່ຕົວ : ______________________ ນາມສະກຸນ ______________________________________

ບ່ອນຢູ່ : ____________________________________________________________

ເມືອງ : ______________________ ລັດ : ________________ ລະຫັດໄປສະນີ : __________

ເບີໂທລະສັບ ກາງ ວັນ: ______________________ ຕອນແລງ : ______________________

ຍາມເວລາທີ່ຈະໂທໄປຫາທ່ານໄດ້ດີທີ່ສຸດ : ______________________________________

ທີ່ຮັບອີ-ເມລ໌ຂອງທ່ານ :

____________________________________________________________

2. **ມີໃຜອີກບໍ່ ທີ່ຈະໂທໄປຫາໄດ້ໃນກໍລະນີທີ່ເຮົາບໍ່ສາມາດຕິດຕໍ່ກັບທ່ານໄດ້?**

ຜູ້ຕ້ອງຕິດຕໍ່ : ______________________ ຄວາມສໍາພັນທີ່ມີກັບທ່ານ : ______________________

ເບີໂທກາງວັນຂອງຜູ້ຕ້ອງຕິດຕໍ່ : ______________________________________________

3. **ໃຜແດ່ ທີ່ໄດ້ຮັບການເລືອກປະຕິບັດ? ໃສ່ກາກົງທຸກຂ່ອງທີ່ເໝາະສົມ.**

☐ ຕົວທ່ານເອງ ☐ ຜູ້ອື່ນອີກຄົນນຶ່ງ

ຫາກແມ່ນຜູ້ອື່ນນອກຈາກຕົວທ່ານເອງ, ກະລຸນາລະບຸ :

ຊື່ຂອງເຈົ້າທຸກ : ____________________________________________________

ເບີໂທລະສັບ ກາງ ວັນ: ______________________ ຕອນແລງ : ______________________

ຄວາມສໍາພັນທີ່ມີກັບທ່ານ : (ເຊັ່ນ ລູກຊາຍຫລືລູກສາວ) ______________________________

ບ່ອນຢູ່ຂອງເຈົ້າທຸກ, **ຫາກບໍ່ຄືກັບບ່ອນຢູ່ຂອງທ່ານ** :

____________________________________________________________

ເມືອງ : ______________________ ລັດ : ________________ ລະຫັດໄປສະນີ : __________

*ຖ້າຫາກວ່າຜູ້ທີ່ໄດ້ຮັບການເລືອກປະຕິບັດມີອາຍຸຕັ້ງແຕ່ 18 ປີຂຶ້ນໄປ, ເຮົາຈະຕ້ອງການລາຍເຊັນຂອງບຸກຄົນຜູ້ນັ້ນ ກ່ອນທີ່ເຮົາຈະສາມາດດໍາເນີນການຕາມຄໍາຮ້ອງທຸກຄັ້ງນີ້. ຖ້າບຸກຄົນນັ້ນເປັນຜູ້ເຍົາ ແລະທ່ານບໍ່ມີອໍານາດຕາມກົດໝາຍທີ່ເຮັດໃຫ້ສາມາດຍື່ນຄໍາຮ້ອງທຸກໃນນາມຂອງນັກຮຽນຜູ້ນັ້ນ, ຈະຕ້ອງມີລາຍເຊັນຂອງພໍ່ ແມ່ ຫລືຜູ້ປົກຄອງຂອງນັກຮຽນຜູ້ນັ້ນ.*

4. **ສະຖາບັນໃດແດ່ ທີ່ໄດ້ກະທໍາການເລືອກປະຕິບັດ?**

(ກົດໝາຍທັງຫລາຍຂອງ OCR ປົກກຸມສະຖາບັນການສຶກສາຕ່າງໆ ເຊັ່ນ ເຂດສຶກສາ, ວິທຍາລັຍແລະມະຫາວິທຍາລັຍ, ຫ້ອງສະມຸດສາທາລະນະ ແລະໜ່ວຍງານຟື້ນຟູທາງອາຊີວະສຶກສາຂອງລັດ)

ຊື່ສະຖານບັນ : ____________________________________________________

ບ່ອນຢູ່ : ____________________________________________________________

ເມືອງ : ______________________ ລັດ : ________________ ລະຫັດໄປສະນີ : __________

**ທ່ານເຄີຍພະຍາຍາມທີ່ຈະແກ້ໄຂເລື່ອງທີ່ກຳລັງຮ້ອງທຸກໂດຍຜ່ານກະບວນການພິຈາລະນາຄຳຮ້ອງທຸກຂອງສະຖາບັນນັ້ນ, ການນັດກັນຮັບຟັງພິຈາລະນາຄຳຮ້ອງທຸກ ຫລືໂດຍຜ່ານໜ່ວຍງານອື່ນໆ ຫລືບໍ່?**

☐ ເຄີຍ ☐ ບໍ່ເຄີຍ

**ຖ້າ ເຄີຍ, ໃຫ້ແຈ້ງລາຍລະອຽດຕໍ່ໄປນີ້ :**

ຊື່ໜ່ວຍງານ : ______________________________ ຍື່ນວັນທີ :____________

ສະຖານະພາບປັດຈຸບັນຂອງການຮ້ອງທຸກ :

______________________________

______________________________

______________________________

(ຫາກຊ່ອງວ່າງບໍ່ພໍ, ກະລຸນາໃຊ້ແຜ່ນເຈັ້ຽເພີ່ມເຕີມ.)

## 5. ບອກລັກສະນະຂອງການເລືອກປະຕິບັດ

OCR ໃຊ້ບັງຄັບກົດລະບຽບທີ່ຫ້າມບໍ່ໃຫ້ມີການເລືອກປະຕິບັດທີ່ອີງໃສ່ເຊື້ອຊາດ, ຜິວພັນ, ສັນຊາດເດີມ; ເພດ; ຄວາມພິການ; ແລະ/ຫລື ອາຍຸ.

ທ່ານໄດ້ຮັບການເລືອກປະຕິບັດໂດຍອີງໃສ່ເຫດຜົນໃດແດ່? (ທ່ານສາມາດເລືອກຊ່ອງດຽວຫລືຫລາຍຊ່ອງໄດ້)

☐ ເຊື້ອຊາດຫລືສີສັນ ☐ ສັນຊາດເດີມ ☐ ຄວາມພິການ ☐ ເພດ ☐ ອາຍຸ
☐ ການແກ້ແຄ້ນເນື່ອງຈາກທ່ານໄດ້ຍື່ນຄຳຮ້ອງທຸກ ຫລືໄດ້ຢືນຢັນສິດທິຂອງທ່ານ

ໃນບັນທັດວ່າງທີ່ຈັດໄວ້ຂ້າງລຸ່ມນີ້, ກະລຸນາອະທິບາຍການໃຊ້ການເລືອກປະຕິບັດແຕ່ລະລາຍໄວ້ຕ່າງຫາກ. ສຳຫລັບແຕ່ລະລາຍ, ທ່ານຈະຕ້ອງມອບລາຍລະອຽດຕໍ່ໄປນີ້

- ວັນທີທີ່ການໃຊ້ການເລືອກປະຕິບັດໄດ້ເກີດຂຶ້ນ;
- ຊື່ບຸກຄົນທີ່ໄດ້ກະທຳການເລືອກປະຕິບັດ;
- ໄດ້ມີຫຍັງເກີດຂຶ້ນ;
- ພິຍານ, (ຖ້າມີ);
- ເຫດຜົນທີ່ທ່ານເຊື່ອວ່າການເລືອກປະຕິບັດໄດ້ເກີດຂຶ້ນຍ້ອນ [ເຊື້ອຊາດ, ເພດ, ຄວາມພິການ, ຫລືໂດຍອີງໃສ່ສິ່ງໃດຕາມທີ່ທ່ານໄດ້ລະບຸຂ້າງເທິງແລ້ວ] ຫລືເຫດຜົນທີ່ທ່ານເຊື່ອວ່າການກະທຳດັ່ງກ່າວແມ່ນການແກ້ແຄ້ນ.

______________________________

______________________________

______________________________

______________________________

______________________________

______________________________

______________________________

(ຫາກຊ່ອງວ່າງບໍ່ພໍ, ກະລຸນາໃຊ້ແຜ່ນເຈັ້ຽເພີ່ມເຕີມ.)

**ທ່ານມີຂໍ້ມູນເປັນລາຍລັກອັກສອນທີ່ທ່ານເຊື່ອວ່າຈະເປັນປະໂຍດຕໍ່ການໃຫ້ເຮົາມີຄວາມເຂົ້າໃຈໃນການຮ້ອງທຸກຂອງທ່ານບໍ່?**

☐ ມີ ☐ ບໍ່ມີ

ຈະມີການຕິດຕໍ່ກັບທ່ານພ້ອມໃຫ້ຄຳສັ່ງແນະນຳສຳຫລັບການມອບລາຍລະອຽດນີ້ **(ກະລຸນາຢ່າສົ່ງຕົ້ນສະບັບ).**

**6.** **ທ່ານຈະຕ້ອງຍື່ນຄຳຮ້ອງທຸກຂອງທ່ານພາຍໃນ 180 ວັນນັບຕັ້ງແຕ່ການເລືອກປະຕິບັດຄັ້ງສຸດທ້າຍໄດ້ເກີດຂຶ້ນ.**

ກົດໝາຍທັງຫລາຍທີ່ເຮົາໃຊ້ບັງຄັບ ບັນຍັດໃຫ້ຈຳຕ້ອງຍື່ນຄຳຮ້ອງທຸກຕໍ່ຫ້ອງການຂອງເຮົາພາຍ 180 ວັນຕັ້ງແຕ່ເຫດການເລືກປົຕິບັດທີ່ກ່າວອ້າງໄດ້ເກີດຂຶ້ນ. ຖ້າເຫດການເລືອກປະຕິບັດຄັ້ງໃດໆ ໄດ້ເກີດຂຶ້ນກ່ອນວັນທີເທິງຕາໄປສະນີຫລືໃບເສັດຮັບຄຳຮ້ອງທຸກຫລາຍກວ່າ 180 ວັນ, ທ່ານອາດຮ້ອງຂໍເອົາການຍົກເວັ້ນຈາກລະຍະ 180 ວັນທີ່ກຳໜົດໄວ້ເຊັ່ນນີ້.

ໃຫ້ບອກວັນທີທີ່ການເລືອກປະຕິບັດຄັ້ງສຸດທ້າຍໄດ້ເກີດຂຶ້ນ : ______________________________

ທ່ານກຳລັງຮ້ອງຂໍເອົາການຍົກເວັ້ນຈາກການກຳໜົດລະຍະ 180 ວັນ ສຳຫລັບການເລືອກປະຕິບັດທີ່ເກີດຂຶ້ນກ່ອນໄດ້ຍື່ນຄຳຮ້ອງທຸກນີ້ເກີນກວ່າ 180 ວັນບໍ່?

☐ ແມ່ນ ☐ ບໍ່ແມ່ນ

ໃຫ້ບອກເຫດຜົນທີ່ທ່ານບໍ່ໄດ້ຍື່ນຄຳຮ້ອງຂໍກ່ອນກຳໜົດ 180 ວັນຂ້າງລຸ່ມນີ້ :

______________________________

______________________________

______________________________

______________________________

______________________________

______________________________

(ຫາກຊ່ອງວ່າງບໍ່ພໍ, ກະລຸນາໃຊ້ແຜ່ນເຈັ້ຍເພີ່ມເຕີມ.)

7. **ທ່ານຢາກໃຫ້ສະຖາບັນເຮັດສິ່ງໃດແດ່ ເນື່ອງຈາກຄຳຮ້ອງທຸກຂອງທ່ານ? ທ່ານກຳລັງຊອກຫາວິທີແກ້ໄຂແນວໃດແດ່?**

______________________________

______________________________

______________________________

______________________________

______________________________

______________________________

______________________________

______________________________

(ຫາກຊ່ອງວ່າງບໍ່ພໍ, ກະລຸນາໃຊ້ແຜ່ນເຈັ້ຍເພີ່ມເຕີມ.)

8. **ກະລຸນາອ່ານເຈັ້ຍຟອມ *Consent Form* ແລະ *Information About OCR's Complaint Resolution Procedures*. ກ່ອນທີ່ເຮົາຈະສາມາດພິຈາລະນາຄຳຮ້ອງທຸກຂອງທ່ານໃນລະຍະທຳອິດໄດ້, ທ່ານຈະຕ້ອງລົງຊື່ໃນຄຳຮ້ອງທຸກຂອງທ່ານແລະເທິງເຈັ້ຍຟອມ *Consent Form* ເພື່ອເປັນການອະນຸຍາດໃຫ້ເຮົາດຳເນີນການຕໍ່ໄປ. ລົງຊື່ເຈັ້ຍຟອມຂ້າງລຸ່ມນີ້, ຂຽນວັນທີ ແລະສົ່ງໄປເຖິງຫ້ອງການໃຊ້ບັງຄັບທີ່ເໝາະສົມໂດຍທາງໄປສະນີ.**

______________________________ ______________

(ລາຍເຊັນ) (ວັນທີ)

# *ແຈ້ງຟອມຄຳຍິນຍອມຂອງຫ້ອງການປ້ອງກັນສິດທິຂອງປະຊາຊົນ*

*Office for Civil Rights Consent Form*

**ກະລຸນາລົງຊື່, ແລະຂຽນວັນທີເທິງພາກ A ຫລືພາກ B :**

ໃຫ້ຂຽນຊື່ຂອງທ່ານເປັນຕົວບັນຈົງ : ____________________________________

ສະຖານບັນທີ່ລະບຸຊື່ໃນຄຳຮ້ອງທຸກ : ____________________________________

**A.** ຂ້າພະເຈົ້າໄດ້ອ່ານ **Notice about Investigatory Uses of Personal Information** ທີ່ກ່ຽວກັບການໃຊ້ຂໍ້ມູນສ່ວນບຸກຄົນໃນການສອບສວນ. ໃນຖານະທີ່ເປັນເຈົ້າທຸກ, ຂ້າພະເຈົ້າເຂົ້າໃຈວ່າ ໃນລະຫວ່າງການສອບສວນ, ທາງ OCR ອາດເຫັນວ່າມີຄວາມຈຳເປັນທີ່ຈະເປີດເຜີຍໃຫ້ຜູ້ຄົນທີ່ຢູ່ທີ່ສະຖາບັນທີ່ກຳລັງຖືກສອບສວນຊາບວ່າຂ້າພະເຈົ້າແມ່ນໃຜ. ຂ້າພະເຈົ້າຈິ່ງໃຫ້ຄຳຍິນຍອມ. ຂ້າພະເຈົ້າຍັງເຂົ້າໃຈວ່າ ຕາມກົດໝາຍ Freedom of Information Act, ທາງ OCR ອາດຈຳເປັນຕ້ອງເປີດເຜີຍລາຍລະອຽດທີ່ໄດ້ຮວບຮວມຈາກຂ້າພະເຈົ້າເນື່ອງຈາກການສອບສວນຄັ້ງນີ້, ຍົກເວັ້ນໃນບາງກໍລະນີ, ເຊັ່ນກໍລະນີທີ່ອາດຖືໄດ້ວ່າການເປີດເຜີຍເປັນການເຂົ້າໄປຫລຽ້ງກັບເລື່ອງສ່ວນຕົວຂອງຂ້າພະເຈົ້າ.

________________________________ ____________________

(ລາຍເຊັນ) (ວັນທີ)

ຫລື

**B.** ຂ້າພະເຈົ້າມີຄວາມປະສົງທີ່ຈະຍື່ນຄຳຮ້ອງທຸກນີ້, ແຕ່ຂ້າພະເຈົ້າບໍ່ຍິນຍອມໃຫ້ມີການໃຊ້ຂໍ້ມູນສ່ວນບຸກຄົນ. ຂ້າພະເຈົ້າໄດ້ອ່ານ Notice about Investigatory Uses of Personal Information ທີ່ກ່ຽວກັບການໃຊ້ຂໍ້ມູນສ່ວນບຸກຄົນໃນການສອບສວນ ຂ້າພະເຈົ້າຈິ່ງເຂົ້າໃຈວ່າ OCR ອາດຈຳເປັນທີ່ຈະລະງັບຄຳຮ້ອງທຸກນີ້ ໃນກໍລະນີທີ່ OCR ບໍ່ສາມາດດຳເນີນການສອບສວນຕໍ່ໄປໂດຍບໍ່ໄດ້ເປີດເຜີຍຊື່ຂອງຂ້າພະເຈົ້າ.

________________________________ ____________________

(ລາຍເຊັນ) (ວັນທີ)

。

# *ຫ້ອງການປ້ອງກັນສິດທິປະຊາຊົນ*

## ຄໍາແຈ້ງຂ່າວກ່ຽວກັບການໃຊ້ຂໍ້ມູນສ່ວນບຸກຄົນໃນການສອບສວນ

ເພື່ອແກ້ໄຂບັນຫາທີ່ທ່ານໄດ້ຮ້ອງທຸກ, ທາງ OCR ອາດຈໍາເປັນຕ້ອງຮວບຮວມແລະວິເຄາະຂໍ້ມູນສ່ວນບຸກຄົນ ເຊັ່ນ ບັນທຶກປະວັດນັກຮຽນ ຫລືບັນທຶກປະວັດການເຮັດການ. ບໍ່ມີກົດໝາຍທີ່ບັງຄັບໃຫ້ທ່ານຈໍາຕ້ອງມອບຂໍ້ມູນສ່ວນຕົວໃຫແກ່ OCR ແລະຈະບໍ່ມີການໃຊ້ມາຕາການລົງໂທດໃດໆ ກັບຜູ້ຮ້ອງທຸກຫລືຜູ້ອື່ນໃດທີ່ບໍ່ໃຫ້ຄວາມຮ່ວມມືໂດຍບໍ່ຍອມມອບລາຍລະອຽດໃດໆ ໃນລະຫວ່າງການດໍາເນີນການແກ້ໄຂ. ແຕ່ວ່າ, ຖ້າ OCR ບໍ່ສາມາດຮັບຂໍ້ມູນທີ່ຕ້ອງການໃນການຫາທາງແກ້ໄຂຄໍາຮ້ອງທຸກຂອງທ່ານໄດ້, ເຮົາອາດຈໍາເປັນຕ້ອງລະງັບຄໍາຮ້ອງທຸກຂອງທ່ານ.

ກົດໝາຍ Privacy Act of 1974, 5 U.S.C./552a , ແລະກົດໝາຍ Freedom of Information Act (FOIA), 5 U.S.C./552 , ວ່າດ້ວຍຂໍ້ມູນສ່ວນບຸກຄົນທີ່ມອບໃຫ້ແກ່ໜ່ວຍງານຂອງລັດຖະບານກາງໝົດທຸກໜ່ວຍ, ຮວມທັງ OCR.

ກດໝາຍ Privacy Act of 1974 ໃຫ້ການປ້ອງກັນຕໍ່ຕ້ານການນໍາຂໍ້ມູນສ່ວນບຸກຄົນທີ່ມັຽນໄວ້ໂດຍລັດຖະບານກາງໄປໃຊ້ໃນທາງທີ່ບໍ່ຊອບ. ກົດໝາຍນີ້ໃຊ້ໄດ້ກັບເອກະສານບັນທຶກທີ່ມັຽນໄວ້ຢູ່ແລະສາມາດເຂົ້າໄປຫາໄດ້ໂດຍໃຊ້ຊື່ຂອງບຸກຄົນນັ້ນ, ເບີບັດໂສໄສ້ ຫລືສິ່ງອື່ນທີ່ເຮັດໃຫ້ຊາບວ່າໃຜແມ່ນໃຜ. ກົດໝາຍດັ່ງກ່າວວາງລະບຽບການຮວບຮວມ, ມັຽນຮັກສາ, ໃຊ້ ແລະເຜີຍແຜ່ຂໍ້ມູນສ່ວນບຸກຄົນາບາງແນວໃນບ່ອນມັຽນເອກະສານຂອງໜ່ວຍງານຕ່າງໆ ຂອງລັດຖະບານກາງ.

ຂໍ້ມູນທີ່ OCR ລວບຮວມແລ້ວຈະຜ່ານການວິເຄາະໂດຍບຸຄລາກອນທີ່ໄດ້ຮັບອະນຸຍາດພາຍໃນໜ່ວຍງານນັ້ນ ແລະຈະນໍາໄປໃຊ້ສະເພາະແຕ່ໃນການຕິດຕາມການປະຕິບັດຕາມແລະໃຊ້ບັງຄັບທີ່ກ່ຽວຂ້ອງກັບສິດທິຂອງປະຊາຊົນເທົ່ານັ້ນ. ແຕ່ວ່າ, ເພື່ອໃຫ້ສາມາດແວ້ໄຂບັນຫາທີ່ມີການຮ້ອງທຸກທາງ OCR ອາດຈໍາຕ້ອງເປີດເຜີຍຂໍ້ມູນບາງແນວໃຫ້ແກ່ບຸກຄົນພາຍນອກໜ່ວຍງານເພື່ອກວດຄວາມຖືກຕ້ອງຂອງຂໍ້ເທັດຈິງຫລືຮວບຮວມຂໍ້ມູນເພີ່ມເຕີມ. ລາຍລະອຽດເຊັ່ນນີ້ອາດຮວມເຖິງອາຍຸຫລືສະພາບຮ່າງກາຍຂອງຜູ້ຮ້ອງທຸກໄດ້. ນອກຈາກນີ້, OCR ອາດຈໍາເປັນຕ້ອງເປີດເຜີຍຂໍ້ມູນທີ່ໄດ້ຂໍຊາບຢ່າງຖືກຕ້ອງຕາມກົດໝາຍ FOIA (ທີ່ອະທິບາຍຂ້າງລຸ່ມນີ້). OCR ຈະບໍ່ປ່ອຍຂໍ້ມູນໃຫ້ແກ່ໜ່ວຍງານຫລືບຸກຄົນອື່ນໃດ ຍົກເວັ້ນໃນກໍລະນີນຶ່ງກໍລະນີໃດໃນຈໍານວນ 11 ກໍລະນີທີ່ກໍາໜົດໃນກົດລະບຽບຂອງກະຊວງໆ ຄື 34 C.F.R./5b.9(b).

OCR ບໍ່ເປີດເຜີຍຊື່ຫລືຂໍ້ມູນອື່ນໃດກ່ຽວກັບບຸກຄົນຜູ້ໃດທີ່ເຮັດໃຫ້ຊາບວ່າລາວແມ່ນໃຜ ຍົກເວັ້ນໃນກໍລະນີທີ່ມີຄວາມຈໍາເປັນຕໍ່ການສອບສວນຫລືກິຈກັມທາງການໃຊ້ບັງຄັບກົດໝາຍຕໍ່ຕ້ານສະຖາບັນໃດໆ ທີ່ລະເມີດກົດໝາຍ, ຫລືຍົກເວັ້ນກໍລະນີທີ່ຈໍາມເປັນຕ້ອງເປີດເຜີຍຂໍ້ມູນດັ່ງກ່າວ ຕາມກົດໝາຍ FOIA ຫລືກົດໝາຍ Privacy Act. OCR ຈະຮັກສາຊື່ຂອງຜູ້ຮ້ອງທຸກໃຫ້ເປັນຄວາມລັບ ຍົກເວັ້ນເທົ່າທີ່ມີຄວາມຈໍາເປັນຕໍ່ການດໍາເນີນການໃຫ້ເປັນໄປຕາມວັດຖຸປະສົງຂອງກົດໝາຍປ້ອງກັນສິດທິຂອງປະຊາຊົນ, ຫລືຍົກເວັ້ນກໍລະນີທີ່ຈໍາເປັນຕາມກົດໝາຍ FOIA, ກົດໝາຍ Privacy Act ຫລືກົດໝາຍອື່ນໆ.

ກົດໝາຍ Freedom of Information Act (FOIA) ໃຫ້ມະຫາຊົນມີສິດໃນການເຂົ້າເຖິງເອກະສານບັນທຶກແລະແຟ້ມເອກະສານຂອງໜ່ວຍງານຕ່າງໆ ຂອງລັດຖະບານກາງ. ບຸກຄົນອາດສາມາດໄດ້ຂໍ້ມູນມາຈາກເອກະສານບັນທຶກຫລາຍປະເພດຂອງລັດຖະບານກາງ, ບໍ່ແມ່ນພຽງແຕ່ເອກະສານທີ່ກ່ຽວຂ້ອງກັບຕົວເຂົາເຈົ້າເທົ່ານັ້ນ. OCR ຈະຕ້ອງປະຕິບັດຕາມຄໍາຮ້ອງຂໍຢ່າງຖືກຕ້ອງຕາມກົດໝາຍ FOIA ໂດຍຈະມີຂໍ້ຍົກເວັ້ນບາງຂໍ້. ໂດຍຮວມ, OCR ບໍ່ຈໍາເປັນຕ້ອງປ່ອຍເອກະສານໃນລະຫວ່າງການດໍາເນີນຄະດີຫລືກະບວນການໃຊ້ບັງຄັບກົດໝາຍ ໃນກໍລະນີທີ່ການປ່ອຍຂໍ້ມູນເຊັ່ນນີ້ອາດສົ່ງຜົນກະທົບຕໍ່ຄວາມສາມາດຂອງ OCR ທີ່ຈະປະຕິບັດຕາມໜ້າທີ່ຂອງຕົນ. ອັນນຶ່ງ, ໜ່ວຍງານຂອງລັດຖະບານກາງອາດສາມາດປະຕິເສດຄໍາຮ້ອງຂໍເອົາເອກະສານບັນທຶກໃດໆ ທີ່ຮວມຮວມເພື່ອວັດຖຸປະສົງໃນການໃຊ້ບັງຄັບກົດໝາຍ ໃນກໍລະນີທີ່ການປ່ອຍເອກະສານດັ່ງກ່າວ ອາດເປັນຜົນໃຫ້ມີການເຂົ້າໄປຫຍຸ້ງກັບເລື່ອງສ່ວນບຸກຄົນໂດຍບໍ່ມີເຫດຜົນອັນສົມຄວນ. ອັນນຶ່ງ, ການຮ້ອງຂໍເອົາເອກະສານອື່ນໆ, ເຊັ່ນບັນທຶກທາງດ້ານການແພດ, ອາດໄດ້ຮັບການປະຕິເສດ ຍ້ອນໄດ້ເຫັນຢ່າງຊັດເຈນວ່າການເປີດເຜີຍນັ້ນຈະເປັນການເຂົ້າໄປຫຍຸ່ງກັບເລື່ອງສ່ວນບຸກຄົນທີ່ບໍ່ເໝາະສົມ.

。